# ບົດທີ 19

# ການໃຊ້ອຳນາດຮຸນແຮງ



ຈັກກະພັດໂລມກົດຂີ່ຂົ່ມເຫັງຄົນຫຼາຍຊາດໃນສະໄຫມພະເຍຊູ ພະຍາມານໄດ້ມາທົດລອງພະເຍຊູໃຫ້ຍຶດອຳນາດເຫນືອທຸກປະເທດໃນໂລກ ທັງຈະປົດປ່ອຍຊາດຍິວດ້ວຍ. ພະເຍຊູເຫັນໃຈຊາດຍິວແທ້ ແລະໃນສະພາບມະນຸດຢາກຈະຊ່ວຍເຂົາຢູ່ແຕ່ເປົ້າຫມາຍຂອງພະເຈົ້າມີແຕ່ຈະໃຫ້ພະເຍຊູຕາຍທີ່ໄມ້ກາງແຂນເພື່ອໄຖ່ບາບເຮົາ. ສະນັ້ນພະອົງຈຶ່ງບໍ່ເຮັດຕາມຄຳຊັກຊວນຂອງພະຍາມານແຕ່ພະອົງຕາຍເພື່ອເຮົາ.

**1** ພະເຢຊູ ພົບການທົດລອງຈາກພະຍາມານພໍດີເວລາຈະອອກໄປປ່າວປະກາດ. ດັ່ງນັ້ນພະອົງເຮັດໃຫ້ຫຼັກການຂອງອາ ນາຈັກສະຫວັນຈະແຈ້ງດີແຕ່ທີວທີ.

ກ. ພະຍາມານສະເໜີຫຍັງນຳພະເຢຊູ ຢູ່ພູສູງ (ມທ 4:8-9)? ___________________

ຂ. ການທົດລອງນັ້ນ ແນໃສ່ທີວເລື່ອງຂອງຂ່າວປະເສີດມັດທາຍ ທີວເລື່ອງໃນຂ່າວປະເສີດມັດທາຍ ແມ່ນຫຍັງ? ______________________________________________

| |
|---|
| ຝຶກ: ໃຫ້ທ່ານເອົາສໍສີແດງຂີດກ້ອງຄຳວ່າ "ລາຊະແຜ່ນດິນ" ທັງສອງຢູ່ໃນ<br>ມັດທາຍ 4:8 |

**2** ພະຍາມານມາທົດລອງພະເຢຊູ ກ່ຽວກັບວິທີທາງທີ່ຈະຕັ້ງອານາຈັກໄວ້ ການທົດລອງນັ້ນຢູ່ບ່ອນໃດ? ________________________________________________________

**3** ການທົດລອງຢູ່ພູສູງ ແລະທີວເລື່ອງຂອງຂ່າວປະເສີດມັດທາຍ ຄ້າຍຄືກັນໃນດ້ານໃດ? ທັງສອງວ່າດ້ວຍແຜ່ນດິນ _________________. (ຈົ່ງຕື່ມຄວາມທີ່ຂາດ)

**4** ຈຸດປະສົງທີ່ພະເຢຊູມາໃນໂລກນີ້ຄື: ເພື່ອປົກຄອງໂດຍຍຸດຕິທຳ ດັ່ງນັ້ນພະອົງມີສິດທີ່ຈະຢຶດອຳນາດບໍ່? ______________________________________________________

**5** ບາງເທື່ອພວກເຮົາຄິດວ່າພະຍາມານມີຮູບຮ່າງຄື: ພະຍາຄຸດ, ທຸລະມານ, ຍັກ, ຜີໂພງ, ຜີຍະວາຍ ໆລໆ ແຕ່ບໍ່ ເປັນຢ່າງນັ້ນ. ພະຍາມານເປັນສັດຕູຂອງເຮົາທີ່ມີອຳນາດຫຼາຍ ພະຍາມານກໍເປັນວິນຍານທີ່ຕາພວກເຮົາບໍ່ເຫັນ ໃນ ເມື່ອພະຍາມານທົດລອງພະເຢຊູ ມານທົດລອງຢ່າງໃດ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ຊອກຫາອານາຈັກດ້ວຍລະບຽບວິທີຂອງພະເຈົ້າ

ຂ. ຊອກຫາອານາຈັກປາສະຈາກພະເຈົ້າ

ຄ. ບໍ່ຊອກຫາອານາຈັກເລີຍ

**6** ທີ່ພະເຢຊູປາດຖະໜາຈະປົກຄອງທຸກຊາດໃນໂລກກໍບໍ່ຜິດ. ໃຫ້ທ່ານອ່ານ ດານີເອນ 7:14 ພະອົງຈະປົກຄອງໄປ ກວ້າງປານໃດ? (ຈົ່ງຕື່ມຄວາມທີ່ຂາດ) "ເພື່ອປະຊາຊົນທຸກ _______________ ທຸກ _______________ ແລະ _____________ ຈະຮັບໃຊ້ເພິ່ນ."

ຕອບ:

**1** *ກ. ລາຊະແຜ່ນດິນໃນໂລກ ຂ. ລາຊະແຜ່ນດິນສະຫວັນ*

**2** *ພູສູງ*

**3** *ສະຫວັນ*

**4** *ມີ*

**5** *ຂ. ຖືກ*

**6** *ປະເທດ...ເຊື້ອຊາດ...ພາສາ*

**7** ດັ່ງນັ້ນ ທີ່ພະເຢຊູຈະຊອກຫາອານາຈັກບໍ່ຜິດ ພະຍາມານທົດລອງພະອົງຈະໃຫ້ຜິດນອກເໜືອຈາກລະບຽບວິທີຂອງ ພະເຈົ້າ. ພະຍາມານຈະຫຼອກລວງໃຫ້ພະເຢຊູຍຶດອຳນາດໂດຍວິທີທາງຂອງມະນຸດຢ່າງໃດ? (ອ່ານ ມທ 4:9) ______________________________________

**8** ມີບາງຄົນທີ່ມັກເວົ້າວ່າ "ເຮັດຊົ່ວເພື່ອຈະໄດ້ດີ" ຄືຖ້າເຮົາເຮັດຜິດເພື່ອຈະໄດ້ຜົນດີຕໍ່ໄປກໍບໍ່ເປັນຫຍັງ. ຖ້າຢ່າງນັ້ນ ພະເຢຊູຈະຂາບໄຫວ້ມານຄາວໜຶ່ງ ເພື່ອຈະປົກຄອງທັງໂລກຕໍ່ໄປຈະເໝາະສົມບໍ່? ແຕ່ພະເຢຊູບໍ່ຖືຢ່າງນັ້ນດອກ ໃນການທົດຢູ່ພູສູງພະຍາມານສະເໜີວ່າຈະໃຫ້ມີ ຜົນດີ ດ້ວຍ ວິທີຜິດ:

ກ. ທີ່ພະອົງມີເປົ້າໝາຍວ່າຈະປົກຄອງທຸກຊາດເປັນ<u>ຜົນດີ</u> ຫຼື <u>ວິທີຜິດ</u>? ______________

ຂ. ທີ່ຈະຂາບໄຫວ້ມານເພື່ອຈະໄດ້ອຳນາດນັ້ນ ເປັນ <u>ຜົນດີ</u> ຫຼື <u>ວິທີຜິດ</u>? ______________

**9** ໃນຄຳເວົ້າ 2 ປະການຕໍ່ໄປນີ້ ໃຫ້ທ່ານຂີດຂ້າອອກຄຳໃດທີ່ບໍ່ຈິງ.

ກ. ພະເຢຊູຖືກທົດລອງໃຫ້ເຮັດຜິດໃນການທີ່ພະອົງຈະປົກຄອງໂລກ.

ຂ. ພະເຢຊູຖືກທົດລອງໃຫ້ເຮັດຜິດໃນການທີ່ຈະປົກຄອງໂລກ ໂດຍວິທີໜຶ່ງວິທີໃດປາສະຈາກພະເຈົ້າ.

**10** ພະເຢຊູຖືກການທົດລອງຢ່າງນີ້ຫຼາຍເທື່ອໃນ 3 ປີ ທີ່ອອກໄປປ່າວປະກາດ. ພະເຢຊູເກີດເປັນຊາດຢິວຈຶ່ງເຫັນໃຈທີ່ ຊາດຢິວນັ້ນຢາກໄດ້ສິດເສລີພາບອອກຈາກຈັກກະພັດໂລມ. ເປັນຕົ້ນພັກຊາດນິຍົມຢາກຈະຕັ້ງປະເທດເອກະລາດຂອງຊາດຢິວ. ພັກຊາດນິຍົມຈະໃຊ້ວິທີໃດ ເພື່ອອອກຈາກຈັກກະພັດໂລມ? (ໃຫ້ເລືອກ)

_______ ຄວາມຮັກ _______ ຄວາມຮຸນແຮງ _______ ບໍ່ຖືກທັງສອງ

**11** ຊາດຢິວຖືກການກົດຂີ່ຂົ່ມເຫັງມາແຕ່ດົນນານ ຄົນຕ່າງປະເທດມາປົກຄອງໃນດິນແດນຂອງພວກເຂົາ. ເຂົາລໍຖ້າວ່າ ພະເມຊີອາຈະມາປົດປ່ອຍພວກເຂົາ ແລ້ວເຂົາຈຶ່ງຢາກໃຫ້ພະເມຊີອາເປັນກະສັດຢ່າງໃດ? (ໃຫ້ເລືອກ)

ກ. ກະສັດຝ່າຍການປະຕິວັດ

ຂ. ກະສັດທີ່ຈະຕາຍເພື່ອເຂົາ

ຄ. ກະສັດທີ່ຈະຖ່ອມຕົວລົງ

ຕອບ:

**7** *ໂດຍຂາບລົງໄຫວ້ມານ*

**8** *ກ. ຜົນດີ ຂ. ວິທີຜິດ*

**9** *ຂີດຂ້າຂໍ້ ກ. ອອກ*

**10** *ຄວາມຮຸນແຮງ*

**11** *ກ.ຖືກ*

**12** ມີເທື່ອໜຶ່ງທີ່ພະເຢຊູພົບການທົດລອງທີ່ຈະເປັນພະເຈົ້າແຜ່ນດິນ. ໃຫ້ອ່ານ ໂຢຮັນ 6:15 ເຂົາເຫັນການອັດສະຈັນ ທີ່ພະອົງລ້ຽງຫ້າພັນຄົນ.

ກ. ພວກຢິວຈຶ່ງຢາກຕັ້ງໃຜເປັນກະສັດເພື່ອປົດປ່ອຍພວກເຂົາ? ___________________

ຂ. ພວກເຂົາຈະໃຫ້ເປັນກະສັດໂດຍທາງຄວາມຮັກ ຫຼືການຣຸນແຮງ? _______________

**13** ໃນບົດກ່ອນໆ ນັ້ນ ເຮົາເຫັນແລ້ວວ່າບາງເທື່ອພະເຢຊູບໍ່ຍອມໃຊ້ອຳນາດຝ່າຍສະພາບພະເຈົ້າ. ພະອົງຈະບໍ່ໃຊ້ອຳ ນາດນັ້ນມາຢຶດອານາຈັກໄວ້ດອກ. ແຕ່ພວກເຮົາຢ່າລືມວ່າ ເຖິງພະເຢຊູບໍ່ໄດ້ຢຶດສິດພະເຈົ້າກໍຕາມ ແຕ່ບໍ່ມີຈັກຄົນ ໃດໃນປະຫວັດສາດຂອງໂລກທີ່ຈະມີປັນຍາ ແລະ ມີຄວາມສາມາດປານພະອົງ, ພະອົງບໍ່ໄດ້ເຮັດບາບຈັກເທື່ອ. ຕາມຄວາມເວົ້າຂອງພະຍາມານ ໃນ ມທ 4:9 ຖ້າພະເຢຊູຈະຢຶດເອົາອຳນາດເໜືອໂລກໂດຍວິທີທາງຂອງມະນຸດຈະ ເປັນຜົນສຳເລັດບໍ່? ________________________________________________________

**14** ພະເຢຊູສາມາດຈະນຳພວກຢິວເຮັດການປະຕິວັດຕໍ່ສູ້ຈັກກະພັດໂລມໄດ້ ແຕ່ຖ້າເຮັດຢ່າງນັ້ນ ພະອົງຈະບໍ່ຕາຍທີ່ໄມ້ ກາງແຂນ ກໍຈະບໍ່ມີການຍົກໂທດຄວາມຜິດບາບ. ຜົນສຸດທ້າຍພະອົງຕັດສິນໃຈວ່າ ຈະບໍ່ຢຶດອຳນາດດ້ວຍທາງນັ້ນ, ເມື່ອລູກສິດຂອງພະອົງຢາກຈະບັງຄັບໃຫ້ເປັນກະສັດພະອົງຫຼີກໜີໄປໃສແລ້ວ? (ອານ ຢຮ 6:15) ___________________________

**15** ພະອົງມີໃຈໜຶ່ງຢາກຊວຍຊາດຢິວແທ້ ແລະອີກຢ່າງໜຶ່ງພະອົງຮູ້ວ່າ ຄົນຢິວບາງຄົນນັ້ນຈະເສຍໃຈໜີໄປເພາະເຫດ ນັ້ນ. ແຕ່ເປັນຢ່າງໃດກໍຕາມພະອົງບໍ່ໄດ້ເອົາວິທີທາງຂອງມະນຸດ ຜົນໄດ້ຮັບເປັນຢ່າງໃດ? (ອ່ານ ຢຮ 6:66) ____________________________________

ຕອບ:

***12*** *ກ. ພະເຢຊູ ຂ. ຣຸນແຮງ*

***13*** *ເປັນ*

***14*** *ອອກໄປຍັງພູເຂົາຜູ້ດຽວ*

***15*** *ລູກສິດຫຼາຍຄົນທໍ້ຖອຍບໍ່ຕິດຕາມພະອົງໄປ*

**16** ພະຍາມານທົດລອງພະເຢຊູດ້ວຍອຸບາຍແບບຂີ້ໂກງເຈົ້າເລ້. ຖ້າພະອົງຈະຫຼິ້ງຜິດແຕ່ປະການດຽວນັ້ນ ພະອົງຈະຊ່ວຍ ຊາດຢິວໃຫ້ເປັນຊາດທີ່ມີເສລີພາບ ພ້ອມນັ້ນພະອົງຈະປົກຄອງໂລກອີກດ້ວຍ.

ກ. ພະອົງປົກຄອງໂລກກໍແມ່ນແທ້ ແຕ່ຍັງມີພາລະກິດອີກປະການໜຶ່ງກ່ອນ ຖ້າວ່າພະເຢຊູຈະຍຶດອຳນາດປົກຄອງ ຈາກພວກຈັກກະພັດໂລມ ພະອົງຍັງຈະຕາຍແທນບາບມະນຸດເຮົາບໍ່? (ຮລ 2:14-15) ______________________________________________

ຂ. ຖ້າວ່າພະເຢຊູຈະຮັບພາລະເຈົ້າຈັກກະພັດໂລມໂດຍຫຼິ້ງຜິດຂາບໄຫວ້ມານ ແປວ່າພະເຢຊູເຮັດບາບ. ອັນໜຶ່ງ ພະເຢຊູເຮັດບາບແລ້ວ ເປັນເຄື່ອງບູຊາບໍລິສຸດບໍ່ໄດ້ ແລະອີກອັນໜຶ່ງ ພະເຢຊູທີ່ມີອຳນາດເໜືອໂລກໂດຍບໍ່ຊະນະ ພະຍາມານ ພວກເຮົາກໍບໍ່ໄດ້ລອດເລີຍ. ເພາະສະນັ້ນ ມີແຕ່ທາງເສັ້ນດຽວທີ່ພະອົງຈະຍົກຜິດບາບເຮົາໄດ້ຄື ທຳ ລາຍຜູ້ມີອຳນາດແຫ່ງຄວາມຕາຍ ຄືພະຍາມານ. ແມ່ນແຕ່ໂດຍທາງຄວາມຕາຍຂອງໃຜ? __________

*ພະເຢຊູຮ່ວມກັບຄົນບາບ ແລ້ວໄຖ່ຄວາມບາບເຮົາທີ່ໄມ້ກາງແຂນ ວັນສຸກເລີຍຮ່ວມກັບຄົນຕາຍ ແຕ່ພະອົງຊະນະຄວາມຕາຍເວລາຄືນພະຊົນໃນວັນອາທິດ.ພະອົງຈຶ່ງຊະນະພະຍາມານໃນທາງ 2 ດ້ານຄື: ຄວາມບາບ ແລະ ຄວາມຕາຍ.*

**17** ໃນສະພາບເປັນມະນຸດ ພະເຢຊູເຫັນໃນຊາດຢິວທີ່ຢາກຈະຕັ້ງປະເທດຂອງເຂົາເປັນເອກະລາດ ແຕ່ພະອົງບໍ່ຍອມຈຶ່ງ ຍົກເລີກຈຸດປະສົງທີ່ມາໃນໂລກ. ໃນ 4 ຂໍ້ພະຄຳພີຕໍ່ໄປນີ້ມີຂໍ້ໃດທີ່ສະແດງວ່າ ພະເຢຊູບໍ່ຍອມຍຶດອຳນາດຕັ້ງອານາຈັກ ໄວ້ດ້ວຍຄວາມຮຸນແຮງ? (ໃຫ້ເລືອກ)

_____ ມທ 26:51-52 _____ ໂຢຮັນ 6:15

_____ ລູກາ 9:51-56 _____ ໂຢຮັນ 18:36

*ໃຫ້ທ່ານອ່ານ ລູກາ 22:36-38 ຖ້າວ່າພະເຢຊູບໍ່ຍອມຍຶດອຳນາດດ້ວຍຄວາມຮຸນແຮງແທ້ໆ ເປັນການແປກປະຫຼາດໃຈທີ່ ພະເຢຊູສັ່ງໃຫ້ລູກສິດຊື້ດາບແມ່ນບໍ່!*

**18** ພວກສາວົກມີດາບຈັກດວງ? (ອ່ານ ລູກາ 22:38 ແລ້ວໃຫ້ເລືອກເອົາຂໍ້ທີ່ຖືກ)

_____ ບໍ່ມີເລີຍ _____ ມີຄົນລະດວງ _____ ທັງໝົດມີແຕ່ສອງດວງ

**19** ໃນລູກາ 22:38 ຄັນພວກສາວົກບອກວ່າມີແຕ່ສອງດວງ ພະເຢຊູຕອບວ່າຢ່າງໃດ? _____

ຕອບ:

***16*** *ກ. ບໍ່ ຂ. ພະເຢຊູ*

***17*** *ຖືກທັງໝົດ 4 ຂໍ້*

***18*** *ທັງໝົດມີແຕ່ສອງດວງ*

***19*** *ພໍແລ້ວ"*

**20** ເພື່ອຈະໃຫ້ເຂົ້າໃຈເຫດການທີ່ພະອົງຈະໃຫ້ສາວົກກຳດາບສອງດວງນັ້ນ ເຮົາຈະເປີດອ່ານໃນຂ່າວປະເສີດລູກາເລື່ອງ ທີ່ເຂົາໃຊ້ດາບໃນສວນ ເຄັດເຊມາເນ.

ກ. ໃນ ລູກາ 22:52 ທະຫານມີອາວຸດໃດແດ່? ______________________________

ຂ. ໃນ ລູກາ 22:49 ພວກສາວົກຢາກຈະເອົາດາບມາເຮັດຫຍັງ? __________________

ຄ. ໃນ ລູກາ 22:50 ເປໂຕຟັນຫູຂອງໃຜໃຫ້ຂາດ? ___________________________

ງ. ໃນ ລູກາ 22:51 ພະເຢຊູ ກ່າວແກ່ເປໂຕຢ່າງໃດ? _________________________

ຈ. ໃນ ລູກາ 22:51 ພະອົງເຮັດຢ່າງໃດກັບຫູນັ້ນ? ___________________________

**21** ຖ້າສາວົກເຫຼົ່ານັ້ນບໍ່ໄດ້ເອົາດາບໄປດ້ວຍ ບາງຄົນອາດຈະເວົ້າວ່າ ພະເຢຊູບໍ່ສາມາດຈະປ້ອງກັນຕົວເພາະບໍ່ມີອາວຸດ. ຖາມວ່າ ຝ່າຍສາວົກມີອາວຸດປ້ອງກັນຕົວບໍ່? _______________

**22** ດັ່ງນັ້ນແມ່ນເພາະເຫດໃດ ທີ່ພະເຢຊູຢາກໃຫ້ສາວົກເອົາດາບໄປດ້ວຍ? (ໃຫ້ເລືອກເອົາຂໍ້ທີ່ຖືກ)

ກ. ພະອົງຢາກໃຊ້ດາບປ້ອງກັນຕົວ

ຂ. ພະອົງຢາກສະແດງວ່າ ມີດາບກໍຕາມເພິ່ນຈະບໍ່ໃຊ້

ຄ. ຢາກໃຊ້ດາບນັ້ນໃນການຕໍ່ສູ້ດ້ວຍຄວາມຮຸນແຮງ

**23** ທຸກເທື່ອທີ່ພະຍາມານທົດລອງພະອົງ ມານມີແຕ່ເປົ້າຫມາຍອັນດຽວຫມົດ ຄືຈະໃຫ້ພະເຢຊູໃຊ້ອຳນາດມາຍຶດເອົາລາ ຊະອານາຈັກຕາມຄວາມຄິດເຫັນຂອງປະຊາຊົນໃນຍຸກນັ້ນ.ແຕ່ພະເຢຊູເລືອກທາງໃດມາຕັ້ງອານາຈັກໄວ້? (ໃຫ້ເລືອກ)

| | | |
|---|---|---|
| ກ. ທາງວັດຖຸສິ່ງຂອງ | (ອາຫານປາສະຈາກພະເຈົ້າ) | ກັບໃນປ່າ. |
| ຂ. ທາງກຽດຕິຍົດ | (ຈອງຫອງປາສະຈາກພະເຈົ້າ) | ຢູ່ຫຼັງຄາພະວິຫານ. |
| ຄ. ການຮຸງແຮງ | (ອຳນາດປາສະຈາກພະເຈົ້າ) | ຢູ່ພູສູງ. |
| ງ. ການຖະຫວາຍຕົວ | (ດ້ວຍຄວາມຮັກຂອງພະເຈົ້າ) | ທີ່ໄມ້ການແຂນ. |

**24** ໃຫ້ອ່ານ ມັດທາຍ 26:52 ແລະ ມັດທາຍ 27:37 ສັນຍາລັກຂອງແຜ່ນດິນສະຫວັນ ຄືດາບ ຫຼື ໄມ້ກາງແຂນ? ______________________________________________

ຕອບ:

**20** *ກ. ດາບ ແລະ ຄ້ອນ ຂ. ຈະເອົາຟັນເຂົາ ຄ. ຂ້ອຍໃຊ້ຂອງມະຫາປະໂລຫິດ*
*ງ. "ເຊົາເສຍເທາະ"*

**21** *ມີ*

**22** *ຂຖືກ ຈ. ເຮັດໃຫ້ດີເປັນປົກກະຕິ*

**23** *ງ. ຖືກ*

**24** *ໄມ້ກາງແຂນ*

**25** ຫຼັງຈາກການທົດລອງເຫຼົ່ານັ້ນໃນປ່າ ພະເຢຊູມີແຜນການຢ່າງໝັ້ນຄົງແລ້ວ ຕະຫຼອດສາມປີທີ່ພະອົງປະກາດພະທຳ ຂອງພະເຈົ້າ ແຜນການນັ້ນບໍ່ໄດ້ປ່ຽນແປງຈັກໜ້ອຍ. ແຜນການນັ້ນຄືຈະຕັ້ງອານາຈັກຂອງພະເຈົ້າໄວ້ໃນໃຈຂອງ ມະນຸດທຸກຄົນ ເພື່ອບໍ່ໃຫ້ໄວ້ໃຈໃນວິທີທາງຂອງມະນຸດ, ວັດຖຸສິ່ງຂອງ ແລະການຮຸນແຮງ ແຕ່ໃຫ້ໄປທາງຄວາມຮັກ ຄວາມຈິງ, ການສະຫລະຕົວ ແລະເຊື່ອຟັງພະເຈົ້າ. ໃນສັນຍາລັກຕໍ່ໄປນີ້ອັນໃດຖືກກັບອານາຈັກຂອງພະເຈົ້າ?





ກ. ________ ດ້ວຍຂ້າຜູ້ອື່ນ ຂ. ________ ດ້ວຍຕາຍແທນຜູ້ອື່ນ

**26** ດັ່ງນັ້ນການທົດລອງຂອງພະເຢຊູຢູ່ພູສູງ ບໍ່ແມ່ນພຽງແຕ່ຈະໃຫ້ພະເຢຊູຂາບໄຫວ້ພະຍາມານຢ່າງດຽວ ແຕ່ແມ່ນທີ່ຈະ ໃຫ້ພະອົງຕັ້ງອານາຈັກໄວ້ດ້ວຍທາງໃຊ້ __________ ເພື່ອຈະຫຼີກເວັ້ນຈາກໄມ້ ____________. (ຕື່ມຄວາມທີ່ຂາດ)

**27** ຢູ່ພູສູງພະຍາມານທົດລອງພະເຢຊູ ໃຫ້ຕັ້ງອານາຈັກໄວ້ຢ່າງໃດ? (ຈົ່ງຕື່ມຄວາມທີ່ຂາດ)
ກ. ໃຫ້ຕັ້ງອານາຈັກໄວ້ດ້ວຍທາງ ________________________________________
ຂ. ເພື່ອຈະຫຼີກເວັ້ນຈາກ ____________________________________________

**28** ການເຂົ້າໄປດ້ວຍຄວາມຮຸນແຮງບໍ່ແມ່ນພຽງແຕ່ຈະໃຫ້ຈັບດາບ ຫຼືຄ້ອນຢ່າງດຽວມາຕັ້ງຄວາມຍຸດຕິທຳ. ພະເຢຊູສອນ ວ່າເທື່ອໃດທີ່ເຮົາຮ້າຍຕໍ່ອ້າຍນັ້ນດ້ວຍບໍ່ມີເຫດ ຄົນນັ້ນໄດ້ເຂົ້າໄປດ້ວຍຄວາມຮຸນແຮງ. ໃນ ມທ 5:21-22 ພະເຢຊູ ຊົງກ່າວວ່າ: (ເລືອກເອົາຂໍ້ທີ່ຖືກ)
ກ. ມີແຕ່ຜູ້ຂ້າຄົນໃນການສູ້ຮົບຈະຖືວ່າຜິດ
ຂ. ມີແຕ່ຜູ້ຂ້າລ້າງແຄ້ນຈະຖືວ່າຜິດ
ຄ. ຜູ້ທີ່ຮ້າຍຕໍ່ອ້າຍນ້ອງໂດຍບໍ່ມີເຫດກໍຜິດ

ຕອບ:

**25** *ຂ. ຖືກ*

**26** *ດາບ (ຮຸນແຮງກໍໄດ້)...ໄມ້ກາງແຂນ*

**27** *ກ. ດາບ (ຮຸນແຮງກໍໄດ້)* *ຂ. ໄມ້ກາງແຂນ*

**28** *ຄ.ຖືກ*

**29** ທາງຣຸນແຮງປາກົດມາໃນການຮ້າຍໂດຍບໍ່ມີເຫດເຖິງບໍ່ໄດ້ຂ້າໃຜກໍຕາມ ເຊັ່ນດຽວກັນທາງຄວາມຮັກນັ້ນກໍບໍ່ໄດ້ໝາຍ ຄວາມວ່າເຮົາຈະຕາຍທີ່ໄມ້ກາງແຂນໃນຕົວທຸກເທື່ອ, ເຮົາມີຄວາມຮັກຂອງຄຣິສຕຽນທີ່ມີຕໍ່ເພື່ອນບ້ານ ທຸກເທື່ອທີ່ເຮົາ ສະຫລະຕົວເພາະເຫັນແກ່ຜູ້ອື່ນແປວ່າເຮົາໄປທາງໄມ້ກາງແຂນແລ້ວ. ໃນ ມທ 16:24 ພະເຍຊູຊົງບອກວ່າ "ຖ້າຜູ້ໃດຢາກຕາມເຮົາມາໃຫ້ຜູ້ນັ້ນຕັດສິດຂອງຕົນເສຍ ແລ້ວຮັບແບກໄມ້ກາງ ແຂນຂອງຕົນ ແລ້ວຕິດຕາມເຮົາ". ຄຳວ່າ "ແບກໄມ້ກາງແຂນຂອງຕົນ" ໝາຍຄວາມວ່າ: (ໃຫ້ເລືອກ)

ກ. ຕາມພະເຍຊູດ້ວຍຖືກຂ້າເພາະຄວາມເຊື່ອຢ່າງດຽວ.

ຂ. ເອົາພະເຍຊູເປັນຕົວຢ່າງໃນຄວາມຮັກແລະການສະຫລະຕົວ.

ຄ. ເອົາພະເຍຊູມາເປັນຕົວຢ່າງໃນການຕັດສິດຂອງຕົນເພື່ອຄົນອື່ນ.

**30** ຖ້າຄົນໃດຕັ້ງຄວາມຍຸດຕິທຳໄວ້ໂດຍຄວາມຣຸນແຮງ ແປວ່າເຮົາໄດ້ເຂົ້າໄປທາງດາບ. ຄວາມຊອບທຳໃນອານາຈັກ ຂອງພະເຈົ້າເຂົ້າມາໄດ້ດ້ວຍທາງເສັ້ນດຽວຄື: ທາງໄມ້ກາງແຂນ. ໃນຫຼາຍຂໍ້ພະຄຳພີຕໍ່ໄປນີ້ໃຫ້ທ່ານຂຽນຄຳ "ດາບ" ໃສ່ຂໍ້ທີ່ອ້າງເຖິງການຣຸນແຮງ ແລະໃຫ້ຂຽນຄຳ "ໄມ້ກາງແຂນ" ໃສ່ຂໍ້ທີ່ອ້າງເຖິງທາງສະຫລະຕົວ

ກ. ________________ I ກລທ 1:18 ງ. ________________ ອຟຊ 2:3

ຂ. ________________ I ກລທ 3:3 ຈ. ________________ ອຟຊ 2:16

ຄ. ________________ ຄລຕ 6:14 ສ. ________________ ອຟຊ 4:32

**31** ກ. ແມ່ນທາງໃດທີ່ບໍ່ຖືກໃນການຕັ້ງຄວາມຊອບທຳຂອງອານາຈັກ? ________________

ຂ. ແມ່ນທາງໃດທີ່ຖືກຕ້ອງເພື່ອຕັ້ງຄວາມຊອບທຳຂອງອານາຈັກໄວ້? ______________

**32** ກ. ວິທີໃດຜິດໃນການຕັ້ງຄວາມຍຸດຕິທຳໄວ້? ______________________________

ຂ. ວິທີໃດເປັນວິທີແທ້ຈິງເພື່ອຕັ້ງຄວາມຍຸດຕິທຳໄວ້? _________________________

ຕອບ:

***29*** *ຂ. ແລະ ຄ. ຖືກ*

***30*** *ຂ. ແລະ ງ. ຖືກກັບ "ດາບ" ກ. ຄ. ຈ. ແລະ ສ. ຖືກກັບ "ໄມ້ກາງແຂນ"*

***31*** *ກ. ຣຸນແຮງ (ດາບກໍໄດ້) ຂ. ໄມ້ກາງແຂນ (ສະຫລະຕົວກໍໄດ້)*

***32*** *ກ. ດາບ (ຣຸນແຮງກໍໄດ້) ຂ. ໄມ້ກາງແຂນ (ສະຫລະຕົວກໍໄດ້)*

**33** ຄົນເຮົາໃນສະໄຫມນີ້ ບໍ່ແຕກຕ່າງກັບຄົນຢິວໃນສະໄຫມພະເຢຊູ ເຊັ່ນ: ຫຼາຍເທື່ອຕໍ່ຫຼາຍທີ່ເຮົາເຄີຍທຸກຍາກ ຄົນໂລມ ໃນສະໄຫມນັ້ນກົດຂີ່ຂົ່ມເຫັງຄົນຢິວ ເຊັ່ນດຽວກັນໃນບາງປະເທດຍັງມີເຈົ້ານາຍຫຼາຍຄົນທີ່ກົດຂີ່ຂົ່ມເຫັງປະຊາຊົນ. ຄົນ ໃດກໍ່ຢາກເຫັນແຕ່ຄວາມຍຸດຕິທຳຕະຫຼອດ ບາງເທື່ອຄົນຄຣິສຕຽນອາດຈະຢາກກະບົດກໍ່ມີ ແຕ່ຕອນໃດທີ່ຈະກະບົດໄປ ຢ່າງນັ້ນແມ່ນເຮົາເຂົ້າໄປໃນທາງຮຸນແຮງ. ພະເຢຊູພົບການທົດລອງເຊັ່ນດຽວກັນກັບເຮົາເວລາຈະເລີ້ມຕົ້ນປ່າວປະ ກາດ. ໃຫ້ອ່ານ ມັດທາຍ 4:10 ພະເຢຊູຊົງຕອບພະຍາມານຢ່າງໃດຢູ່ ພູສູງ? ________

________________________________________________________________

**34** ພະເຢຊູ ອາໄສວິທີຮຸນແຮງປົດປ່ອຍປະຊາຊົນຢິວແມ່ນບໍ່? ______________________
ແຕ່ແລ້ວພະອົງຕັດສິນໃຈວາຈະເຂົ້າໄປທາງສະລະ __________ ແລະຄວາມ __________
ພະອົງເລືອກໄປຕາມທາງທີ່ຖືກ ຕາມນ້ຳພະໄທພະເຈົ້າເພື່ອຕັ້ງອານາຈັກໄວ້ (ຕື່ມຄວາມທີ່ຂາດ)

*ໃນພະຄຳພີ 'ຊາຂາລີຢາ 4:6 ບອກວ່າ "ບໍ່ແມ່ນ ດ້ວຍແຮງ ບໍ່ແມ່ນດ້ວຍອຳນາດ ແຕ່ດ້ວຍພະວິນຍານຂອງເຮົາ"*

**35** ກ. ນ້ຳພະໄທຂອງພະເຈົ້າ ຈະສຳເລັດໄດ້ຢ່າງໃດ? (ຈົ່ງຕື່ມຄວາມທີ່ຂາດ) "ບໍ່ແມ່ນດ້ວຍແຮງ ບໍ່ແມ່ນດ້ວຍອຳນາດ ແຕ່ວ່າດ້ວຍ ____________________________________ "
ຂ. ພະເຈົ້າ ຈະຕັ້ງອານາຈັກໄວ້ດ້ວຍອຳນາດໃດ? ____________________________

**36** ພະເຢຊູໃຊ້ວິທີໃດ ຕັ້ງອານາຈັກໄວ້ໃນຄວາມຊອບທຳແລະຄວາມຍຸດຕິທຳ? __________

________________________________________________________________

ຕອບ:

***33*** *"ຈົ່ງຂາບໄຫວ້ພະອົງຜູ້ເປັນພະເຈົາຂອງເຈົາ ແລະ ປະຕິບັດພະອົງແຕ່ຜູ້ດຽວ"*

***34*** *ບໍ່; ຕົວ....ຮັກ*

***35*** *ກ. ພະວິນຍານຂອງພະເຈົາ ຂ. ພະວິນຍານ*

***36*** *ສະຫລະຕົວໃຫ້ພະເຈົາ ແລະຮັກພະອົງ (ຄືທາງໄມ້ກາງແຂນ)*

**37** ຈົ່ງຈື່ໄວ້ວ່າ "ບໍ່ແມ່ນດ້ວຍແຮງ ບໍ່ແມ່ນດ້ວຍອຳນາດ ແຕ່ວ່າດ້ວຍພະວິນຍານຂອງພະເຈົ້າ". ໃນວິທີທາງ 7 ປະການຕໍ່ໄປນີ້ມີທາງໃດທີ່ຂາບໄຫວ້ພະຍາມານ (ໃຫ້ໝາຍ)

ກ. ______ ຊອກຫາຄວາມຍຸດຕິທຳທາງຮຸນແຮງ

ຂ. ______ ຫຼິ້ນດົນຕີໃຫ້ຈັບໃຈຄົນ ແທນທີ່ຈະສັນລະເສີນພະເຈົ້າ

ຄ. ______ ຊ່ອຍເຫຼືອເພື່ອນບ້ານທີ່ທຸກຍາກ

ງ. ______ ອອກໄປປ່າວປະກາດຂ່າວປະເສີດ

ຈ. ______ ເອົາເຄື່ອງນຸ່ງໃຫມ່ແລະເກົ່າໄປໃຫ້ເພື່ອຊັກຊວນໃຫ້ຄົນມາປະຊຸມ.

ສ. ______ ຜິດຖຽງກັບຄົນຈຶ່ງຈະໃຫ້ເຂົາຮັບເຊື່ອ

ຊ. ______ ເຊື່ອຟັງຄວາມພະເຈົ້າ ແລະສະຫລະຕົວໃຫ້ແກ່ພະອົງ

ໃຫ້ທ່ານຄິດເບິ່ງດີໆ! ທ່ານເຄີຍເຫັນຈັກຄົນທີ່ຮັບເຊື່ອໃນພະເຢຊູດ້ວຍທາງຮຸນແຮງ ຫຼືໃຊ້ອຳນາດຂົ່ມຂູ່ບີບບັງຄັບ? ມີວິທີ ທີ່ບັງຄັບຄົນໃຫ້ຈະເລີນກ້າວໜ້າໃນຊີວິດຄຣິສຕຽນບໍ່? ເອົາຂອງຈ້າງໃຫ້ເປັນສິນບົນ ຄົນນັ້ນຈະເປັນຄຣິສຕຽນ ທີ່ແທ້ຈິງບໍ່? ໃຫ້ທ່ານຮັບພິຈາລະນາເລື່ອງນີ້ດີໆ ແລ້ວຂຽນຄວາມຄິດເຫັນໃສ່ຕໍ່ໄປນີ້: ______________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

______________________________________________________________

*ຈົ່ງເຮັດບົດເສັງທີ 19*

ຕອບ:

***37*** *ກ. ຂ. ຈ. ສ. ທີ່ໝາຍ*